# An introduction to social security

# ການແນະນຳເຣື່ອງ
# ສວັດດີການສັງຄົມ

English/Lao

**An introduction to social security**
Social security is an insurance program for workers and their families. It is administered by the U.S. Social Security Administration.

Social security pays monthly cash payments to workers and their families when the worker can no longer work because of retirement, disability, or death.

To qualify for social security payments, a worker must work for a certain number of years in a job where social security taxes are taken out of his or her wages. Almost all workers in America have social security taxes taken out of their wages.

If you work in a job where you pay social security taxes, you and your family may qualify for social security payments someday.

**Your social security card**
You and every member of your family must get a social security card. You must have a social security card to get a job. You need a social security card to get medical assistance or other services you may qualify for.

You have to go to a social security office to get a social security card. Look in your city's telephone book to find the street address of the social security office. It is listed under Social Security Administration. Or, if you have an American sponsor, ask him or her to take you to the office or tell you how to get there.

When you go to the social security office, please take the U.S. Immigration Form I-94 and any other papers you were given when you entered the United States. You also could take any identification papers you have from your home country.

Someone at the social security office will help you to fill out an application for a social security card. The person will ask you to give your name, your place of birth, your date of birth, your mother's name, your father's name, and the address of the place where you are living now. The person also will ask you to sign your name on the application form.

You will not get your social security card at the office. Your card will be mailed to you.

Usually, you will receive your social security card in about 6 weeks. But, if you need your card sooner because you are trying to get a job, tell the person at the social security office. The person will arrange for your card to be mailed to you in about 7 to 10 days.

The person at the social security office will give you a Form SSA-5028, *Receipt for Application for a Social Security Number*. Show this paper to your boss if you get a job before your social security card comes in the mail. Then, when you get your card, show it to your boss.

Your name and your social security number will be printed on your social security card. Your social security number is very important. You will have this number throughout your life. No one else can have the same number as you. Do not let anyone else use your social security number.

If you work, your boss will need to see your social security number to report your wages to the Social Security Administration. The Social Security Administration will need your number to keep a record of your wages. And, you will need to show your social security number to other U.S. Government agencies.

You should always carry your social security card with you. You should always use your social security number and your name as they are printed on the card. Be sure to show your card to anyone you work for.

If you ever lose your social security card, go to the social security office again. Take your Immigration Form I-94 with you. Tell the people in the office that you lost your card. They will mail you a new card showing the same number and name that were on the first card.

**While you work**

When you work in a job, your boss will take some money out of your wages to pay social security taxes. Your boss will take the same amount of taxes out of his or her own money. These taxes are sent to the U.S. Government and are used to make social security payments.

Each year, your boss will report your wages to the Social Security Administration. A record showing your name, your social security number, and the wages you earn will be kept at the Social Security Administration. This record will be used to decide if you and your family qualify for social security payments in the future.

**Social security payments**

If you work long enough in a job where social security taxes are taken out of your wages, you will qualify for social security retirement payments when you reach age 65. You can start getting retirement payments when you reach age 62, but your payments would be smaller than the payments you would get at age 65.

If you become severely ill or injured or blind at any age, you may qualify for social security disability payments if you worked long enough in a job where you paid social security taxes. To qualify for disability payments, you must be unable to work because you have a severe illness or injury that is expected to last for at least 12 months or to result in death.

If a worker qualifies for retirement or disability payments, the worker's wife or husband and minor children may be able to get monthly payments, too.

If you die after you have worked long enough in a job where you paid social security taxes, your widow or widower and minor children may qualify for social security survivors payments.

Remember, you cannot get social security payments just because you are 65 years old or because you are too sick to work. Before you or your family can get any payments, you must work for a certain number of years in a job where social security taxes are taken out of your wages.

The people in the social security office can tell you how long you have to work to qualify for payments. They also can help you apply for monthly payments if you think you are eligible.

**Supplemental security income**

Supplemental security income is an assistance program for aged, blind, and disabled people who don't have much money. It also is administered by the U.S. Social Security Administration.

Supplemental security income is usually called SSI. The SSI program makes monthly cash payments to people who qualify for them. SSI is not the same as social security. People may qualify for SSI payments even if they have never worked in a job.

To qualify for SSI, you must be 65 years old or older, or you must be blind, or you must be disabled. Disabled means that you are unable to work because of a severe illness or injury that is expected to last at least 12 months or to result in death. You also must have very little money to qualify for SSI. You must have been lawfully admitted into the United States or admitted under color of law. And, you must live in the United States.

If you have a child who is blind or severely ill or injured, he or she may qualify for SSI payments.

If you think you may qualify for SSI payments, you should go to a social security office. Look in your city's telephone book to find the street address of the office. It is listed under Social Security Administration.

When you go to the office, please take your U.S. Immigration Form I-94 and any other papers you were given when you entered the United States. You also should take any identification papers you have from your home country.

The people in the social security office will help you to fill out an application for SSI payments. If you qualify, they will tell you when your payments will start and how you will get them.

**Medicare**

Medicare is a health insurance program for people who are 65 years old or older and for some disabled people. It is administered by the U.S. Health Care Financing Administration. Medicare helps to pay hospital and doctor bills and other medical expenses.

To qualify for Medicare, you must be 65 years old or older or you must be disabled. You also must work for a certain number of years in a job where you pay social security taxes or you must qualify for social security payments.

The people in the social security office can tell you more about Medicare.

**An important message about changing your name**

If you ever change your name, you should tell the U.S. Immigration and Naturalization Service. This is very important because you will need to get a new Immigration form showing your new name.

When you get the Immigration form with your new name on it, take the form to the social security office and show it to the people there. They will arrange for you to get a new social security card showing your new name.

**For more information**

If you have questions about social security, SSI, or Medicare, go to a social security office. The people there will be glad to help you.

## ການແນະນຳເຣື່ອງສວັດດີການສັງຄົມ

ເຣື່ອງການສວັດດີການສັງຄົມແມ່ນໂຄງການໃຫ້ການຮັບປະກັນພວກພະນັກງານແລະຄອບຄົວພວກເຂົາເຈົ້າ. ການດຳເນີນງານຢູ່ໃນການຄວບຄຸມຂອງກົມສວັດດີການສັງຄົມຂອງຣັຖບານກາງສະຫະຣັດ.

ທາງການສວັດດີການສັງຄົມຈ່າຍເງິນສົດເປັນລາຍເດືອນໃຫ້ແກ່ພວກຄົນງານ ແລະ ຄອບຄົວພວກເຂົາ ເມື່ອພວກ ຄົນງານເຫຼົ່ານັ້ນບໍ່ສາມາດເຮັດວຽກການຕໍ່ໄປອີກໄດ້ ເພາະພົ້ນອາຍຸອອກກິນເບັ້ຽບຳນານເຈັບປ່ວຍເຮັດວຽກການບໍ່ໄດ້, ຫຼືລົ້ມຫາຍຕາຍຈາກໄປ.

ເພື່ອຈະເປັນຜູ້ມີສິດໄດ້ຮັບເງິນສວັດດີການສັງຄົມນີ້ ຄົນງານຕ້ອງເຮັດການຢູ່ບ່ອນທີ່ເຂົາຫັກເງິນພາສີສວັດດີການອອກໄວ້ດົນພໍສົມຄວນ. ຄົນງານເກືອບທັງໝົດທຸກຄົນໄດ້ຖືກຫັກເງິນພາສີສວັດດີການສັງຄົມອອກໄວ້ຈາກເງິນເດືອນພວກເຂົາເຈົ້າທຸກຄົນ.

ຖ້າທ່ານເຮັດວຽກການຢູ່ບ່ອນທີ່ທ່ານຫັກເງິນພາສີອອກໄວ້ນັ້ນ ທ່ານເອງ ແລະ ຄອບຄົວຂອງທ່ານອາດຈະມີສິດໄດ້ຮັບເງິນສວັດດີການສັງຄົມໃນມື້ໃດມື້ນຶ່ງ

## ບັດສວັດດີການສັງຄົມຂອງທ່ານ

ທ່ານເອງ ແລະ ທຸກໆຄົນໃນຄອບຄົວທ່ານຈະຕ້ອງມີບັດສວັດດີການສັງຄົມນີ້ທັງໝົດທຸກຄົນ. ເພື່ອຈະໄດ້ເຮັດວຽກການເຮົາຕ້ອງມີບັດສວັດດີການສັງຄົມນີ້. ທ່ານຈຳເປັນຕ້ອງການບັດສວັດດີການສັງຄົມນີ້ເພື່ອຂໍການຊ່ວຍເຫຼືອພຍາບານ ຫຼື ຮ້ອງຂໍເອົາອັນໃດອັນນຶ່ງຈາກບ່ອນທີ່ອຳນວຍຄວາມສະດວກຊຶ່ງອາດແມ່ນໜ້າທີ່ໄດ້ຮັບ.

ທ່ານຕ້ອງໄປຫ້ອງການສວັດດີການສັງຄົມເພື່ອຂໍເອົາບັດນີ້. ໃຫ້ຊອກຫາທີ່ຢູ່ຫ້ອງການນີ້ໃນປຶ້ມໂທຣະສັບ. ມັນຈະຖືກຈົດຢູ່ໃຕ້ຫົວຂໍ້ສວັດດີການສັງຄົມ. ຫຼື ຖ້າທ່ານຫາກມີຜູ້ອຸປຖັມເປັນຄົນອະເມຣິກັນ ຫ້ອງຂໍໃຫ້ເພິ່ນໄປສົ່ງ ຫຼື ບອກທາງໄປໃຫ້.

ເມື່ອທ່ານໄປຫາຫ້ອງການສວັດດີການສັງຄົມ ໃຫ້ເອົາບັດອາຍ--໙໔ ທີ່ທາງກົມກວດຄົນເຂົ້າເມືອງອອກໃຫ້ນັ້ນ ແລະເອກກະສານຕ່າງໆທີ່ໄດ້ຮັບຕອນເຂົ້າເມືອງມານັ້ນໄປນຳ.

ພ້ອມທັງໃຫ້ຖືບັດປະຈຳຕົວ ຫລືຫນັງສືທີ່ມີຊື່ທ່ານເອົາຕິດຕົວມານຳນັ້ນ.

ຜູ້ໃດຜູ້ນຶ່ງທີ່ຫ້ອງການນັ້ນຈະຊ່ວຍທ່ານຂຽນຄຳຮ້ອງຕາມໃບຟອມທີ່ມີໄວ້ນັ້ນ. ພະນັກງານຈະຖາມ ຊື່ ແລະນາມສະກຸນ, ວັນເດືອນປີເກີດຂອງທ່ານ, ຊື່ພໍ່, ຊື່ແມ່ຂອງທ່ານພ້ອມທັງທີ່ຢູ່ປັດຈຸບັນນັ້ນນຳ. ທ່ານ ເຮັດໃບສມັກແລ້ວ ເອົາຈະຂໃຫ້ທ່ານ ພ້ອມທັງທະເປັດຈຸບັນບັນເລີ ທານເທດໃບສມັກແລວ ເອົາຈະຂໍໃຫ້ທ່ານສົງຊື່ໃສ່ໃນໃບສມັກດັ່ງກ່າວນັ້ນ

ທ່ານຈະບໍ່ໄດ້ຮັບບັດສວັດດີການສັງຄົມຈາກຫ້ອງການນັ້ນແຕ່ທ່ານຈະໄດ້ຮັບມັນທາງໄຮງສານ. ຕາມປົກກະຕິແລ້ວທ່ານຈະໄດ້ຫັບບັດນີ້ ໃນຣະຫວ່າງ ໒ ອາທິດ. ແຕ່ຖ້າທ່ານຫາກຕ້ອງການບັດນີ້ກ່ອນ ເນື່ອງຈາກທ່ານກຳລັງຊອກຫາວຽກການເຮັດຢູ່ກໍໃຫ້ບອກພວກພະນັກງານຫ້ອງການສວັດດີການສັງຄົມຮູ້ເຣື່ອງນຳ. ພວກເຂົາເຈົ້າຈະພຍາຍາມຈັດແຈງໃຫ້ທ່ານໄດ້ຮັບບັດສວັດດີການສັງຄົມນີ້ພາຍໃນ ໗ ຫາ ໑໐ ວັນ. ພະນັກງານຫ້ອງການສວັດດີການສັງຄົມຈະອອກຫນັງສື ໃບຟອມ ແອສ–ແອສ–ເອ–໔໐໗, ຊຶ່ງແມ່ນໃບຮັບຕາມຄຳຮ້ອງທີ່ສມັກຂໍເລກຫມາຍສວັດດີການສັງຄົມປະຈຳຕົວ. ໃຫ້ເອົາຫນັງສືນີ້ແຈ້ງຕໍ່ຜູ້ຈັດການ ຫາກເມື່ອວ່າທ່ານໄດ້ວຽກກ່ອນໄດ້ວຽກກ່ອນໄດ້ຮັບບັດຈາກທາງໂຮງສານ. ເມື່ອໃດໄດ້ຮັບບັດນີ້ແລ້ວໃຫ້ເອົາໄປແຈ້ງຜູ້ເປັນເຈົ້າຂອງຫນ້ານນັ້ນກໍໄດ້.

ຊື່ທ່ານ ແລະ ເລກຫມາຍສວັດດີການສັງຄົມຈະພິມໃສ່ບັດນີ້. ເລກປະຈຳຕົວນີ້ສຳຄັນທີ່ສຸດ. ທ່ານຈະເອົາເລກຫມາຍສວັດດີການສັງຄົມນີ້ໄວ້ໃຊ້ຕລອດຊີວິດ. ຜູ້ອື່ນບໍ່ສາມາດມີເລກຫມາຍປະຈຳຕົວສວັດດີການສັງຄົມອັນດຽວກັນນັ້ນທ່ານ. ຢ່າໄດ້ໃຫ້ຜູ້ອື່ນໃຊ້ເລກຫມາຍສວັດດີການສັງຄົມປະຈຳຕົວຂອງທ່ານເປັນເດັດຂາດ.

ຖ້າທ່ານເຂົ້າເຮັດວຽກການ ຜູ້ເປັນນາຍຈະຕ້ອງຂໍເບິ່ງບັດສວັດດີການສັງຄົມຂອງທ່ານ ເພື່ອໃຊ້ໃນການລາຍງານເງິນເດືອນໃຫ້ກົມການປົກຄອງສວັດດີການສັງຄົມ. ກົມນີ້ຕ້ອງການເລກສວັດດີການສັງຄົມປະຈຳຂອງທ່ານເພື່ອການບັນທຶກລາຍໄດ້ ຫລື ເງິນເດືອນຂອງທ່ານ. ແລະນອກນັ້ນ ທ່ານບັງຈະຕ້ອງ

ການເລກສວັດດີການສັງຄົມທ່ານນີ້ ແຈ້ງຕໍ່ອົງການຣັຖບານອະເມ
ຣິກັນອີກ.

ທ່ານຄວນຖືບັດສວັດດີການສັງຄົມນີ້ຕິດຕົວທ່ານໄປສເມີ.
ທ່ານຄວນໃຊ້ຊື່ ແລະ ເລກສວັດດີການສັງຄົມຕາມທີ່ພິມໄວ້ໃນບັດ
ນັ້ນ. ເມື່ອທ່ານເຮັດການໃຫ້ບ່ອນໃດ ໃຫ້ເອົາບັດສວັດດີການນີ້
ແຈ້ງນາຍຜູ້ກ່ຽວຂ້ອງທຸກເທື່ອ.

ຖ້າທ່ານຫາກເຮັດບັດສວັດດີການສັງຄົມເສັຽ ໃຫ້ໄປຫາຫ້ອງ
ການສວັດດີການສັງຄົມຄືນອີກແລະ ໃຫ້ຖືເອົາໃບ ອາຍ-໙໔
ຂອງທ່ານນັ້ນໄປພ້ອມ. ໃຫ້ບອກພະນັກງານທີ່ຫ້ອງການນັ້ນຮູ້ວ່າ
ເຈົ້າໄດ້ເຮັດບັດສວັດດີການສັງຄົມເຈົ້າເສັຽ. ທາງເຈົ້າໜ້າທີ່
ຈະຈັດການສົ່ງບັດໃໝ່ແປໃຫ້ທ່ານທາງໄຣງສາຍ ຈະມີຊື່ ແລະ
ເລກໝາຍປະຈຳຕົວແບບດຽວກັນກັບບັດໃບເກົ່າຂອງທ່ານ

## ເວລາເຮັດວຽກການຢູ່ນັ້ນ

ຕອນທີ່ທ່ານເຮັດວຽກການຢູ່ນັ້ນນາຍຈ້າງທ່ານຈະຫັກເງິນຈາກເງິນ
ເດືອນທ່ານໄວ້ເປັນຄ່າພາສີສວັດດີການສັງຄົມ. ທາງຝ່າຍທີ່
ເປັນນາຍຈ້າງກໍ່ຈະເອົາເງິນອອກໄວ້ເທົ່າກັນກັບພາສີສວັດດີການນັ້ນ
ຄືກັນ. ພາສີເຫຼົ່ານີ້ໄດ້ຖືກສົ່ງໄປໃຫ້ຣັຖບານເພື່ອໃຊ້ໃນ
ການຈ່າຍເລື່ອງສວັດດີການສັງຄົມ.

ທຸກໆປີ ນາຍຈ້າງທ່ານຈະລາຍງານເງິນເດືອນຂອງທ່ານໄປໃຫ້ກົມ
ການປົກຄອງສວັດດີການສັງຄົມ. ຂໍ້ບັນທຶກຈະມີຊື່, ເລກໝາຍສວັດ
ດີການປະຈຳຕົວທ່ານ ພ້ອມທັງລາຍໄດ້ທັງໝົດຈະຖືກເກັບມ້ຽນໄວ້ຢູ່ທີ່
ກົມການປົກຄອງສວັດດີການສັງຄົມ. ຂໍ້ບັນທຶກນີ້ຈະເກັບໄວ້ໃຊ້ເພື່ອຈະຮູ້ວ່າ
ພາຍໜ້າໄປທ່ານເອງ ແລະ ຄອບຄົວທ່ານນັ້ນຈະເປັນຜູ້ມີສິດໄດ້ຮັບເງິນ
ສວັດດີການສັງຄົມນີ້ບໍ່.

## ເງິນຈ່າຍສວັດດີການສັງຄົມ

ຖ້າທ່ານຫາກເຮັດການ ດົນລົມຄວນຢູ່ບ່ອນທີ່ຫັກພາສີສວັດດີການ
ສັງຄົມຈາກເງິນເດືອນທ່ານ ທ່ານຈະເປັນຜູ້ມີສິດໄດ້ຮັບເງິນ-
ເບັ້ຽບຳນານສວັດດີການສັງຄົມ ເມື່ອອາຍຸທ່ານຮອດ ໖໕ ປີ.

ທ່ານຈະເລີ້ມຮັບເງິນເບັ້ຽບຳນານ ຕອນທີ່ທ່ານຮອດອາຍຸ ໖໒ ປີກໍໄດ້ແຕ່ເງິນທີ່ໄດ້ຮັບນັ້ນອາດຈະໜ້ອຍກວ່າຈຳນວນທີ່ທ່ານຄວນໄດ້ຮັບຕອນທ່ານມີອາຍຸຮ ໖໕ ປີ ອອກກິນເບັ້ຽບຳນານ.

ຖ້າທ່ານຫາກກາຍເປັນຄົນເຈັບປ່ວຍ, ພິການ ຫລື ຫລືຕາບອດເມື່ອອາຍຸເທົ່າໃດກໍຕາມ ທ່ານກໍມີສິດໄດ້ຮັບເງິນພິການສວັດດີການສັງຄົມ ຖ້າທ່ານຫາກໄດ້ເຮັດວຽກການປູ່ບ່ອນທີ່ທ່ານເສັຽພາສີສວັດດີການສັງຄົມນັບດົນພໍສົມຄວນ. ເພື່ອຈະເປັນຜູ້ມີສິດໄດ້ຮັບເງິນພິການນີ້ ທ່ານຕ້ອງເປັນຜູ້ທີ່ບໍ່ສາມາດເຮັດວຽກການໄດ້ເນື່ອງຈາກການເຈັບປ່ວຍໜັກ ຫືລ ເຈັບສາຫັດທີ່ອາດເຖິງແກ່ຄວາມຕາຍ ຫລື ດົນຢ່າງນ້ອຍ ໑໒ ເດືອນ.

ຖ້າຄົນງານເປັນຜູ້ມີສິດໄດ້ເງິນເບັ້ຽບຳນານ ຫລື ເງິນພິການສວັດດີການສັງຄົມດັ່ງກ່າວນີ້ແລ້ວ ເມັຽ ຫລື ຜົວທັງພວກລູກໆທີ່ອາຍຸບໍ່ທັນພົ້ນກະສຽນນັ້ນ ກໍສາມາດໄດ້ຮັບເງິນສວັດດີການສັງຄົມນີ້ເຊັ່ນດຽວກັນ.

ຫລັງຈາກທ່ານໄດ້ເຮັດວຽກການປູ່ບ່ອນທີ່ທ່ານເສັຽພາສີສວັດດີການສັງຄົມນີ້ດົນສົມຄວນແລ້ວ ຖ້າທ່ານຕາຍຈາກໄປຜູ້ທີ່ຍັງເຫລືອໃນຄອບຄົວທ່ານ ຈະເປັນພໍ່ໝ້າຍ ຫລື ແມ່ໝ້າຍ ແລະພວກລູກໆທີ່ຍັງບໍ່ພົ້ນກະສຽນທັງຫລາຍນັ້ນ ກໍຈະເປັນຜູ້ມີສິດໄດ້ຮັບເງິນສວັດດີການສັງຄົມນີ້ຢູ່.

ໃຫ້ເຂົ້າໃຈວ່າ ທ່ານບໍ່ສາມາດໄດ້ຮັບເງິນສວັດດີການສັງຄົມຍ້ອນວ່າທ່ານມີອາຍຸຮອດ ໖໕ ປີ ຫລື ຍ້ອນວ່ນ ທ່ານບໍ່ສະບາຍຫລາຍ ແລະ ເຮັດວຽກບໍ່ໄດ້ເທົ່ານັ້ນ. ກ່ອນທີ່ທ່ານເອງແລະ ຄົນໃນຄອບຄົວຈະສາມາດໄດ້ຮັບເງິນດັ່ງກ່າວນີ້, ທ່ານຕ້ອງໄດ້ເຮັດການປູ່ບ່ອນທີ່ທ່ານເສັຽພາສີລາຍໄດ້ຈາກເງິນເດືອນທ່ານເອງນັບດົນຫລາຍປີເຕີບ.

ພະນັກງານເຮັດວຽກທີ່ຫ້ອງການສວັດດີການສັງຄົມຈະສາມາດບອກໃຫ້ທ່ານຮູ້ໄດ້ວ່າ ທ່ານຕ້ອງເຮັດວຽກການປູ່ບ່ອນນັບດົນປານໃດຈຶ່ງຈະໄດ້ຮັບເງິນດັ່ງກ່າວນີ້. ພວກເຂົາເຈົ້າຈະສາມາດຊ່ວຍທ່ານເຮັດຄຳຮ້ອງຂໍເງິນສວັດດີການສັງຄົມເປັນເດືອນໆໄປໄດ້ເຊັ່ນດຽວກັນ ຖ້າທ່ານຫາກຄິດວ່າທ່ານເອງມີໜ້າທີ່ໄດ້ຮັບເງິນນີ້.

## ເງິນສວັດດີການເພີ້ມເຕີມ

ລາຍໄດ້ທີ່ເປັນເງິນສວັດດີການເພີ້ມເຕີມ ແມ່ນມາຈາກໂຄງການຊ່ວຍເຫຼືອຜູ້ຄົນທີ່ເຖົ້າ, ຕາບອດ, ພິການບໍ່ສາມາດເຮັດວຽກການໄດ້ ແລະ ບໍ່ມີເງິນພຽງພໍ. ໂຄງການນີ້ຢູ່ໃນການປົກຄອງຂອງກົມສວັດດີການສັງຄົມຂອງຣັຖບານກາງເຊັ່ນກັນ.

ເງິນສວັດດີການເພີ້ມເຕີມນີ້ ຕາມທັມມະດາແລ້ວ ມັກເອີ້ນກັນວ່າ "ແອສ-ແອສ-ອາຍ". ໂຄງການ ແອສ-ແອສ-ອາຍນີ້ໄດ້ຈ່າຍເງິນເປັນເດືອນໆໃຫ້ແກ່ຜູ້ທີ່ມີຫນ້າທີ່ໄດ້. ໂຄງການນີ້ບໍ່ແມ່ນອັນດຽວກັນກັບໂຄງການສວັດດີການສັງຄົມ. ຜູ້ທີ່ອາດຈະມີຫນ້າທີ່ໄດ້ເງິນ ແອສ-ແອສ-ອາຍ ນີ້ກໍບໍ່ຈຳເປັນວ່າພວກເຂົາເຈົ້າເຫຼົ່ານັ້ນໄດ້ເຄີຍເຮັດວຽກການມາກ່ອນເລີຍ- ຈັກເທື່ອກໍຕາມ.

ເພື່ອຈະມີສິດ (ຫນ້າທີ່) ໄດ້ເງິນ ແອສ-ແອສ-ອາຍ, ທ່ານຕ້ອງມີອາຍຸ ໖໕ ປີຂື້ນໄປ, ຫລື ເປັນຄົນຕາບອດ, ຫລື ເປັນຄົນພິການທີ່ບໍ່ສາມາດເຮັດວຽກການໄດ້. ພິການ ຫມາຍຄວາມວ່າ ທ່ານບໍ່ສາມາດເຮັດວຽກການໄດ້ ເນື່ອງມາຈາກການເຈັບປ່ວຍຫນັກ ຫລື ອາດເຖິງຕາຍ ຫລື ມີການເຈັບເປັນທີ່ຕ້ອງໄດ້ຮັກສາດົນຢ່າງນ້ອຍ ໑໒ ເດືອນ. ທ່ານກໍຕ້ອງມີເງິນພຽງເລັກນ້ອຍ ເພື່ອຈະມີສິດໄດ້ເງິນ ແອສ-ແອສ-ອາຍ ນີ້. ທ່ານຕ້ອງເປັນຄົນທີ່ເຂົ້າມາຢູ່ໃນສະຫະຣັດທີ່ຖືກຕ້ອງຕາມກົດຫມາຍ ຫລື ຕາມທີ່ກົດຫມາຍອະນຸຍາດໃຫ້.ແລ້ວ ທ່ານຕ້ອງເປັນຄົນທີ່ຢູ່ສະຫະຣັດອະເມຣິກາ.

ຖ້າທ່ານຫາກມີລູກເປັນຄົນຕາບອດ ຫລື ປ່ວຍຫນັກ ຫລື ເຈັບປ່ວຍ ລາວຜູ້ນັ້ນກໍມີຫນ້າທີ່ໄດ້ເງິນ ແອສ-ແອສ-ອາຍ.

ຖ້າທ່ານຫາກຄິດວ່າທ່ານເອງອາດມີຫນ້າທີ່ໄດ້ເງິນ ແອສ-ແອສ- ອາຍ ນີ້ແລ້ວ, ທ່ານຄວນໄປຫ້ອງການສວັດດີການສັງຄົມ. ໃຫ້ຊອກເບິ່ງໃນປຶ້ມໂທຣະສັບຂອງເມືອງທີ່ທ່ານຢູ່ນັ້ນ ຊອກຫາເລກອາຄານ ແລະ ຖະນົນບ່ອນຫ້ອງການຕັ້ງຢູ່. ຫ້ອງການນີ້ຈະຢູ່ໃຕ້ຫົວຂໍ້ກົມສວັດດີການສັງຄົມ.

ເມື່ອທ່ານໄປຫ້ອງການນີ້ ໃຫ້ທ່ານເອົາບັດ... ແລະ ເອກະສານອື່ນໆທີ່ທ່ານຖືຕອນເຂົ້າປະເທດມານັ້ນໄປພ້ອມ. ທ່ານຄວນມີບັດປະຈຳຕົວ ຫຼື ໜັງສືອື່ນໃດໜຶ່ງທີ່ມີມາຈາກບ້ານເກີດໄປນຳ ກໍ່ຈະເປັນການດີ. ພະນັກງານຫ້ອງການສະວັດດີການສັງຄົມຈະຊ່ວຍທ່ານຂຽນຄວາມໃສ່ໃນຄຳຮ້ອງຂໍເງິນ ແລ້ວ ແລ້ວ ວາງນັ້ນ. ຖ້າທ່ານມີໜ້າທີ່ໄດ້ເງິນພວກເຂົາເຈົ້າຈະບອກໃຫ້ຮູ້ວ່າທ່ານຈະໄດ້ຮັບເງິນຈຳນວນເທົ່າໃດ ແລະ ທ່ານຈະເງິນນັ້ນແນວໃດ.

## ການເບິ່ງແຍງພະຍາບານ

ການເບິ່ງແຍງພະຍາບານ ແມ່ນໂຄງການປະກັນໄພດ້ານພະຍາບານຜູ້ທີ່ມີອາຍຸ 65 ປີ ຫຼື ເຖົ້າກວ່ານັ້ນ ແລະ ພວກທີ່ບໍ່ສາມາດເຮັດວຽກງານໄດ້. ໂຄງການນີ້ຢູ່ໃນການຄວບຄຸມໂດຍທັນການເງິນການເບິ່ງແຍງພະຍາບານສະຫະລັດອາເມຣິກາ. ໂຄງການນີ້ຊ່ວຍໃນການຈ່າຍຄ່າໂຮງໝໍ, ຄ່າທ່ານໝໍ ແລະ ຄ່າໃຊ້ຈ່າຍກ່ຽວກັບການພະຍາບານແນວອື່ນໆອີກ.

ເພື່ອຈະເປັນຜູ້ມີສິດໄດ້ການເບິ່ງແຍງພະຍາບານ ທ່ານຕ້ອງມີອາຍຸ 65 ປີ ຫຼື ເຖົ້າກວ່ານັ້ນ ຫຼື ມີການບໍ່ສາມາດເຮັດວຽກງານໄດ້. ທ່ານເອງຕ້ອງເປັນຜູ້ທີ່ໄດ້ເຮັດວຽກງານຢູ່ບ່ອນທີ່ເກັບເງິນສະວັດດີການສັງຄົມໄວ້ນັ້ນ ດົນຫຼາຍປີເຕີມ, ຫຼືວ່າ ທ່ານຕ້ອງເປັນຜູ້ມີໜ້າທີ່ໄດ້ຮັບເງິນສະວັດດີການສັງຄົມກໍໄດ້. ພວກເຈົ້າໜ້າທີ່ປະຈຳຫ້ອງການສະວັດດີການສັງຄົມຈະສາມາດອະທິບາຍເລື່ອງການເບິ່ງແຍງພະຍາບານໃຫ້ທ່ານໄດ້ຢ່າງແຈ່ມແຈ້ງ.

## ຄຳເຕືອນທີ່ສຳຄັນກ່ຽວກັບການປ່ຽນຊື່ຂອງທ່ານ

ຖ້າທ່ານຫາກປ່ຽນຊື່ທ່ານເອງ ທ່ານຄວນໄປຫາຫ້ອງການກົມກວດຄົນເຂົ້າເມືອງ ແລະ ປ່ຽນສັນຊາດແຈ້ງຄວາມປະສົງໃຫ້ພວກເຈົ້າໜ້າທີ່ທາງຟັງ. ອັນນີ້ເປັນເລື່ອງສຳຄັນທີ່ສຸດເນື່ອງຈາກວ່າທ່ານຕ້ອງມີໜັງສືທີ່ມີຊື່ໃໝ່ຂອງທ່ານຈາກກົມກວດຄົນເຂົ້າເມືອງນີ້. ເມື່ອທ່ານໄດ້ໜັງສືທີ່ມີຊື່ໃໝ່ຂອງທ່ານຈາກກົມກວດຄົນເຂົ້າເມືອງນັ້ນ

ແລ້ວ ໃຫ້ນຳເອົາມັນໄປໃຫ້ພະນັກງານຫ້ອງການສວັດດີການສັງຄົມ.
ພວກເຂົາເຈົ້າຈະຈັດແຈງການສວັດດີການສັງຄົມໃຫ້ທ່ານແລກໃໝ່
ຊຶ່ງມັນແທ້ກໍມີຊື່ຂອງທ່ານໃນບັດນັ້ນ.

## ເພື່ອລາຍລະອຽດເພີ້ມເຕີມ

ຖ້າທ່ານຫາກມີຄຳຖາມກ່ຽວເຣື່ອງສວັດດີການສັງຄົມ,
ແອສ -ແອສ ອາຍ ຫລື ເຣື່ອງການເບິ່ງແຍງພຍາບານ,
ໃຫ້ໄປທີ່ຫ້ອງການສວັດດີການສັງຄົມພວກພະນັກງານໃນນັ້ນຍິນດີທີ່ຈະ
ພາກັນຊ່ວຍພວກທ່ານ.

U.S. GOVERNMENT PRINTING OFFICE : 1981 O-341-18

**U.S. Department of**
**Health and Human Services**
Social Security Administration
SSA Publication No. 05-10712
December 1980